**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ຫ້ອງການ
ກອງເລຂາປ້ອງກັນ ແລະຄວບຄຸມໄພພິບັດ                    ເລກທີ          /ຫກ.ກຂ
                    ນະຄອນຫຼວງວຽງຈັນ, ວັນທີ

# ບົດລາຍງານຫຍໍ້

## ຜົນເສຍຫາຍຈາກໄພນໍ້າຖ້ວມ, ການຊ່ວຍເຫຼືອສຸກເສີນ ແລະ ແຜນການຟື້ນຟູ ຂອງ ຂະແໜງສາທາລະນະສຸກ

## I. ສະພາບຜົນກະທົບ ແລະ ຄວາມເສຍຫາຍຂອງຂະແໜງການສາທາລະນະສຸກ

- ຈາກໄພນໍ້າຖ້ວມ, ພື້ນຖານໂຄງລ່າງສາທາລະນະສຸກໃນທົ່ວປະເທດແມ່ນກະທົບ ແລະ ເສຍຫາຍເປັນຈຳນວນຫຼາຍ ເປັນຕົ້ນ: ນໍ້າລິນ 103 ແຫ່ງ, ນໍ້າບາດານ 3,358 ແຫ່ງ, ນໍ້າສ້າງ 5386 ແຫ່ງ ແລະ ວິດຖ່າຍ 19,502 ແຫ່ງ. ຫຼາຍກວ່າໝູ່ແມ່ນຢູ່ແຂວງວຽງຈັນ, ນະຄອນຫຼວງວຽງຈັນ, ແຂວງ ບໍລິຄຳໄຊ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ. ນອກຈາກນັ້ນ ໂຮງໝໍເມືອງ 2 ແຫ່ງ (1 ແຫ່ງຢູ່ເມືອງແບ່ງແຂວງອຸດົມໄຊ ແລະ 1 ແຫ່ງຢູ່ເມືອງທ່າໂທມ) ແລະ ສຸກສາລາ ຢູ່ແຂວງຫຼວງນໍ້າທາ, ແຂວງອຸດົມໄຊ, ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງຫຼວງພະບາງ, ແຂວງວຽງຈັນ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ ຈຳນວນ 32 ແຫ່ງແມ່ນຖືກຜົນກະທົບ ແລະ ເປ່ເພ. ສະເພາະ ຢູ່ 6 ບ້ານ (ບ້ານໃໝ່, ທ່າຫີນໄຕ້, ທ່າແສງຈັນ, ຫີນລາດ, ຕໍມະຍອດ ແລະ ກຸ່ມບ້ານແທ) ຂອງເມືອງສະໜາມໄຊ ຖືກທຳລາຍ ນໍ້າສ້າງ 167 ແຫ່ງ, ນໍ້າບາດານ 291 ແຫ່ງ, ເຄື່ອງກອງນໍ້າ 106 ເຄື່ອງ, ວິດຖ່າຍ 425 ແຫ່ງ. (ຂໍ້ມູນນີ້ບໍ່ໄດ້ລວມໃນຂໍ້ມູນທົ່ວປະເທດທີ່ໄດ້ກ່າວມາຂ້າງເທິງ)

## II. ການປະຕິບັດໃຫ້ການຊ່ວຍເຫຼືອສຸກເສີນຂອງຂະແໜງການສາທາລະນະສຸກ

- ເພື່ອຕອບໂຕ້ ແລະ ຊ່ວຍເຫຼືອປະຊາຊົນຜູ້ຖືກຜົນກະທົບຈາກໄພນໍ້າຖ້ວມຢູ່ທົ່ວປະເທດ ກະຊວງສາທາສາລະນະສຸກ ໄດ້ສ້າງຕັ້ງກອງເລຂາຄະນະຮັບຜິດຊອບປ້ອງກັນ ແລະ ແກ້ໄຂໄພພິບັດຂຶ້ນ ທີ່ປະກອບດ້ວຍບັນດາທ່ານຫົວໜ້າກົມອ້ອມຂ້າງກະຊວງສາທາລະນະສຸກ ໂດຍແມ່ນທ່ານລັດຖະມົນກະຊວງສາທາລະນະສຸກ ເປັນຜູ້ຊີ້ນຳໂດຍກົງ ແລະ ທ່ານຫົວໜ້າຫ້ອງການເປັນຫົວໜ້າກອງເລຂາຄະນະຮັບຜິດຊອບດັ່ງກ່າວ.

- ສະເພາະໄພນ້ຳຖ້ວມນຢູ່ເມືອງສະໜາມໄຊ, ແຂວງອັດຕະປື, ພາຍຫຼັງໄດ້ຮັບຂ່າວມີໄພນ້ຳຖ້ວມຢູ່ເມືອງດັ່ງກ່າວ ໃນຄືນຂອງວັນທີ 23 ສິງຫາ 2018, ຕໍ່ມາຂອງຕອນເຊົ້າຂອງວັນທີ 24 ສິງຫາ 2018 ກະຊວງສາທາລະນະສຸກ ໄດ້ສົ່ງທີມງານແພດສຸກເສີນ ຈຳນວນ .... ຄົນພ້ອມດ້ວຍ ຢາ, ອຸປະກອນການແພດ ທີ່ຈຳເປັນ ຈຳນວນລົງໄປສົມທົບກັບແຂວງ ແລະ ເມືອງ ໃນການຊ່ວຍເຫຼືອຜູ້ບາດເຈັບ, ຊ່ວຍກູ້ໄພ ແລະ ເຄື່ອນຍ້າຍຜູ້ບາດເຈັບ. ຕໍ່ມາ, ໄດ້ສົ່ງທີມແພດຜູ້ຊ່ຽວຊານດ້ານຕ່າງໆ ລວມທັງແພດຈິດຕະສາດ ລົງໄປຊ່ວຍບໍລິການປິ່ນປົວຄົນເຈັບ ຢູ່ບັນດາຈຸດພັກຊົ່ວຄາວ (ດອນບົກ, ສມ ຈັນທາ, ປີນດົງ, ຕຳມະຢອດ), ຢູ່ໂຮງເມືອງສະໜາມໄຊ ແລະ ໂຮງໝໍແຂວງ, ໄດ້ຈັດສົ່ງຢາ ແລະ ອຸປະກອນການແພດ ທີ່ຈຳເປັນໃຫ້ທຸກຈຸດບໍລິການ ເພື່ອຮັບປະກັນໃຫ້ການບໍລິການມີປະສິດຕິຜົນ, ໄດ້ສົ່ງທີມງານລະບາດວິທະວິທະຍາ, ທີມງານອະນາໄມ, ແລະ ໜ່ວຍງານສັກຢາກັນພະຍາດ ລົງໄປແນະນຳ ແລະ ນຳພາການຮັກສາອະນາໄມສິ່ງແວດລ້ອມ, ສ້າງວິດຖ່າຍ, ອ້າງລ້າງມື ຢູ່ບັນຈຸດພັກເຊົາຊົ່ວຄາວ, ແນະນຳການບໍລິໂພກອາຫານໃຫ້ປອດໄພ, ພົ່ນຢາຂ້າເຊື້ອພະຍາດ, ຢາຂ້າຍຸງ, ສັກຢາກັນພະຍາດຕ່າງໆໃຫ້ແມ່ຍິງ, ເດັກນ້ອຍ ແລະ ຄົນສູງອາຍຸ, ກວດກາ ແລະ ຊອກຄົ້ນ ຄົນເຈັບທີ່ເປັນພະຍາດວັນນະໂຣກ. ໄດ້ສົ່ງທີມງານປະເມີນຜົນກະທົບ ແບບການປະເມີນໄວ ລົງໄປປະເມີນ ເພື່ອໃຫ້ຮູ້ໄດ້ຜົນເສຍເຫດດ້ານສາທາລະນະສຸກໃນເບື້ອງຕົ້ນ, ໄດ້ສົ່ງທີມງານພາລະທິການ ລົງໄປກວດກາສາງຢາ, ການເກັບຮັກສາ ຢາ ແລະ ອຸປະກອນການແພດ ເພື່ອຮັບປະກັນໃຫ້ການເກັບຮັກສາຢາ ແລະ ອຸປະກອນການ ມີຄຸນນະພາບ ແລະ ມີຄວາມປອດໄພ.
- ໄລ່ມາຮອດປະຈຸບັນ ສາມາດບໍລິການປິ່ນປົນຄົນເຈັບລວມທັງໝົດ 8,378 ຄົນ, ໃນນັ້ນມີເດັກລຸ່ມ 5 ປີ 1,434 ຄົນ, ໄດ້ສັກຢາ ແລະ ຢອດຢາ ໃຫ້ແມ່ຍິງ, ເດັກນ້ອຍ ລວມທັງໝົດ 16,265 ຄົນ, ໄດ້ກວດ ແລະ ປະເມີນພາວະໂພຊະນາການໃນເດັກນ້ອຍອາຍຸລຸ່ມ 5 ປີ ທັງໝົດ 1,781, ໃນນັ້ນພົບເດັກຂາດອາຫານປານກາງ 82 ຄົນ, ຂາດອາຫານຮ້າຍແຮງ 10 ແລະ ໄດ້ຢາຍອາຫານເສີມ (Nutri-bester) ໃຫ້ເດັກທີ່ຂາດອາຫານ 155 ຄົນ ແລະ ຝຸ່ນວິຕາມິນ-ເກືອແຮ່ ໃຫ້ເດັກນ້ອຍ ແລະ ແມ່ຍິງຜູ້ໃຫ້ນົມລູກທັງໝົດ 488 ຄົນ. ໄດ້ຂຸດນ້ຳບາດານ ພ້ອມທັງກວດກາຄຸນນະພາບຂອງນ້ຳ 19 ບໍ່, ນ້ຳສ້າງ 1 ບໍ່, ສ້າງວິດຖ່າຍ 104 ແຫ່ງ.
- ກະຊວງສາທາລະນະສຸກໄດ້ຕິດຕາມສະພາບການ ແລະ ຊີ້ນຳ ນຳພາການຊ່ວຍເຫຼືອຜູ້ຖືກຜົນກະທົບຈາກໄພນ້ຳຖ້ວມຢ່າງໃກ້ສິດ ແລະ ດ້ວຍຄວາມຮັບຜິດຊອບສູງ. ໄດ້ຈັດກອງປະຊຸມໄພພິບັດສຸກເສີນຢູ່ກະຊວງສາທາລະນະສຸກທຸກມື້ ແລະ ມີກອງເລຂາ ເພື່ອຕິດຕາມ, ປະສານງານ ແລະ ລາຍງານສະພາບການ ຕະຫຼອດ 24 ຊົ່ວໂມງ ເປັນເວລາ 1 ເດືອນກວ່າ, ມາຮອດປະຈຸບັນສະພາບການແມ່ນໄດ້ບັນເທົາລົງແລ້ວ ຈຶ່ງຈັດກອງກອງປະຊຸມສຸກເສີນເປັນ 3 ວັນ ຕໍ່ອາທິດ.

## III. ແຜນການຟື້ນຟູຫຼັງໄພນ້ຳຖ້ວມ:

- ປັບປຸງ, ສ້ອມແປງ ຫຼື ສ້າງໃໝ່ (ຖ້າຈຳເປັນ) ບັນດາພື້ນຖານໂຄງລ່າງສາທາລະນະສຸກ ທີ່ຖືກເປ່ເພ, ເສຍຫາຍຍ້ອນໄພນ້ຳຖ້ວມ ເປັນຕົ້ນ: ລະບົບນ້ຳສະອາດ, ວິດຖ່າຍ, ໂຮງໝໍນ້ອຍ (ສຸກສາລາ) ແລະ ໂຮງໝໍເມືອງ ພ້ອມທັງປະກອບຢາ ແລະ ອຸປະກອນການແພດ ທີ່ຈຳເປັນ ໃນຂອບເຂດທົ່ວປະເທດ ໂດຍສະເພາະເລັ່ງໃສ່ເຂດຫ່າງໄກສອກຫຼີກ, ບ່ອນຫຍຸ້ງຍາກ ແລະ ມີຄວາມຈຳເປັນສູງ ເພື່ອຮັບປະກັນໃຫ້ການບໍລິການສາທາລະນະສຸກ ສາມາດກັບມາໃຫ້ການບໍລິການໄດ້ປົກກະຕິ ແລະ ຢ່າງທົ່ວເຖິງ

- ເພີ່ມທະວີການວຽກງານໂຄສະນາສຸຂະສຶກສາໃຫ້ຄວາມຮູ້ກ່ຽວກັບການຮັກສາສຸຂະພາບ ຕາມຫຼັກອະນາໄມ 3 ສະອາດໃຫ້ປະຊາຊົນບັນດາເຜົ່າເຂົ້າໃຈ ແລະ ຈັດຕັ້ງປະຕິບັດ, ພ້ອມທັງຊຸກຍູ້ ສົ່ງເສີມໃຫ້ຊຸມຊົນ ແລະ ສັງຄົມເຂົ້າຮ່ວມໃນວຽກງານການກັນ ແລະ ສົ່ງເສີມສຸຂະພາບ ເປັນຕົ້ນ: ການສ້າງສະພາບແວດລ້ອມທີ່ດີໃນການດໍາລົງຊີວິດ ເຊັ່ນ: ການກໍາຈັດຂີ້ເຫຍື້ອໃຫ້ຖືກວິທີ, ການກໍາລາຍແຫຼ່ງເພາະພັນຂອງຍຸງ, ການສ້າງ ແລະ ຊົມໃຊ້ນໍ້າສະອາດ, ວິດຖ່າຍ, ການສັກຢາກັນພະຍາດ, ການບໍລິໂພອາຫານທີ່ຖືກຫຼັກໂພຊະນາການ, ການວາງແຜນຄອບຄົວ, ການຝາກທ້ອງ ແລະ ເກີດລູກນໍາແພດຜູ້ຊໍານານຊ່ວຍເກີດ ແລະ ອື່ນໆ
- ຈັດກອງປະຊຸມທອດຖອນບົດຮຽນ, ສາທິດ ແລະ ເຮັດຈໍາລອງ ກໍລະນີໄພສຸກເສີນຕ່າງໆພາຍໃນຂະແໜງການ ແລະ ຮ່ວມກັບຂະແໜງການອື່ນ ເພື່ອກຽມຄວາມພ້ອມໃນການໂຕ້ຕອບຕໍ່ກໍລະນີໄພພິບັດສຸກເສີນຕ່າງໆ

**ກອງເລຂາປ້ອງກັນ ແລະ ຄວບຄຸມໄພພິບັດ**

**ຜູ້ສະຫຼຸບລາຍງານ**